This VIS translation is out of date. When you give your patient this translation, also give them the up-to-date English version of it.
To get both, and to find out what was updated, go to www.immunize.org/vis

# ວັກຊີນນິວໂມຄອກຄັສ ຊະນິດໂພລີແຊັກຄາໄລ

# VACCINE

## ທ່ານຈຳເປັນຕ້ອງຮູ້ຫຍັງແດ່

ມີແຈ້ງການຂໍ້ມູນຂ່າວສານກ່ຽວກັບຢາວັກຊີນຫຼາຍຊະນິດເປັນ ພາສາສະເປນ ແລະ ພາສາອື່ນໆ. ເບິ່ງຢູ່ໃນ www.immunize.org/vis.

## 1 ໂຣກ ນິວໂມຄອກຄັສ (Pneumococcal)

ໂຣກ ນິວໂມຄອກຄັສ ມີສາຍເຫດມາຈາກ ແບັກທີເຣຍ ສະເຕຣັບໂຕຄອກຄັສນິວໂມເນຍ (*Streptococcus pneumoniae*). ມັນແມ່ນສາຍເຫດຕົ້ນໆຂອງການປ່ວຍ ແລະ ການເສຍຊີວິດ ຈາກໂຣກທີ່ສາມາດປ້ອງກັນ ໄດ້ໂດຍຢາວັກຊີນໃນສະຫະຣັຖອາເມລິກາ. ໃຜກໍ່ຕາມສາມາດເປັນໂຣກ ນິວໂມຄອກຄັສ ໄດ້, ແຕ່ວ່າຄົນຈຳນວນໜຶ່ງ ທີ່ມີເກນຄວາມສ່ຽງຫຼາຍກວ່າຄົນອື່ນແມ່ນ:

- ຄົນທີ່ມີອາຍຸ 65 ປີ ຫຼື ແກ່ກວ່ານັ້ນ
- ຄົນທີ່ຍັງນ້ອຍໆ
- ຄົນທີ່ມີບັນຫາສຸຂະພາບແນ່ນອນໃດໜຶ່ງ
- ຄົນທີ່ມີພູມຄຸ້ມກັນພະຍາດອ່ອນແອ
- ຄົນທີ່ສູບຢາປະຈຳ

ໂຣກ ນິວໂມຄອກຄັສ ສາມາດນຳໄປສູ່ການຕິດເຊື້ອທີ່ຮຸນແຮງ ຂອງ:

- ປອດ (ໂຣກປອດໄຄ່),
- ເລືອດ (ການຕິດເຊື້ອໃນສາຍເລືອດ), ແລະ
- ການປົກຫຸ້ມສະໝອງ (ໂຣກເຍື່ອຫຸ້ມສະໝອງອັກເສບ).

ໂຣກປອດອັກເສບ ນິວໂມຄອກຄັສ ຂ້າຊີວິດຄົນ 1 ໃນທຸກໆ 20 ຄົນ ທີ່ຕິດເຊື້ອ. ໂຣກຕິດເຊື້ອໃນສາຍເລືອດຂ້າຊີວິດ 1 ໃນທຸກໆ 5 ຄົນ, ແລະ ໂຣກເຍື່ອຫຸ້ມສະໝອງອັກເສບ ຂ້າຊີວິດ 3 ໃນທຸກໆ 10 ຄົນ.

ຄົນທີ່ມີບັນຫາສຸຂະພາບເຊິ່ງອະທິບາຍຢູ່ໃນພາກສ່ວນທີ່ 3 ຂອງ ເອກະສານ ສະບັບນີ້ ອາດຈະມີຄວາມສ່ຽງສູງຕໍ່ການຕາຍ ເນື່ອງຈາກໂຣກນີ້.

## 2 ຢາວັກຊີນ ນິວໂມຄອກຄັສ ຊະນິດໂພລີແຊັກຄາໄລ (PPSV)

ການປິ່ນປົວການຕິດເຊື້ອນິວໂມຄອກຄັສ ດ້ວຍຢາເພັນນີຊີລິນ ແລະ ຢາຊະນິດອື່ນ ແມ່ນເຄີຍມີປະສິດທິຜົນຫຼາຍ. ແຕ່ບາງສາຍພັນຂອງເຊື້ອໂຣກນີ້ ໄດ້ມີການດື້ຢາ. ສິ່ງນີ້ເຮັດໃຫ້ການປ້ອງກັນເຊື້ອໂຣກ ຜ່ານການສັກຢາວັກຊີນ, ແມ່ນມີຄວາມສຳຄັນຫຼາຍຂື້ນ.

ຢາວັກຊີນ PPSV ສາມາດປ້ອງກັນ ເຊື້ອແບັກທີເຣຍ ນິວໂມຄອກຄັສໄດ້ ເຖິງ 23 ຊະນິດ, ລວມເຖິງ ຊະນິດທີ່ອາດຈະເປັນສາຍເຫດຂອງ ໂຣກຮ້າຍແຮງ.

ຜູ້ໃຫຍ່ທີ່ແຂງແຮງທົ່ວໄປເກືອບທັງໝົດທີ່ໄດ້ສັກວັກຊີນແມ່ນພັດທະນາ ພູມຄຸ້ມກັນຕໍ່ເຊື້ອພະຍາດເຫຼົ່ານີ້ເກືອບທັງໝົດ ຫຼື ທັງໝົດ ຫຼັງຈາກ 2 ຫາ 3 ອາທິດ ຫຼັງຈາກການສັກຢາ. ຄົນແກ່, ເດັກທີ່ອາຍຸຕ່ຳກວ່າ 2 ປີ, ແລະ ຄົນທີ່ມີອາການປ່ວຍຊຳເຮື້ອ ອາດຈະບໍ່ມີການຕອບສະໜອງດັ່ງເຊັ່ນນີ້ ຫຼື ທັງໝົດ.

ຢາວັກຊີນປ້ອງກັນໂຣກ ນິວໂມຄອກຄັສ ອີກຊະນິດໜຶ່ງ (ວັກຊີນນິວໂມຄອກຄັສຄອນຈະເກັດ (pneumococcal conjugate vaccine), ຫຼື PCV) ແມ່ນແນະນຳໃຫ້ໃຊ້ສຳລັບເດັກນ້ອຍ ທີ່ມີອາຍຸຕ່ຳກວ່າ 5 ປີ. ລາຍລະອຽດຂອງຢາວັກຊີນ PCV ແມ່ນໄດ້ຮັບການອະທິບາຍໄວ້ຢູ່ໃນ ເອກະສານຂໍ້ມູນວັກຊີນຊຶ່ງແຍກສະເພາະຕ່າງຫາກ.

## 3 ຜູ້ໃດແດ່ທີ່ຄວນຈະໄດ້ຮັບການສັກຢາວັກຊີນ PPSV?

- ຜູ້ໃຫຍ່ທັງໝົດທີ່ ອາຍຸ 65 ປີຂຶ້ນໄປ.
- ໃຜກໍ່ຕາມທີ່ ອາຍຸລະຫວ່າງ 2 ຫາ 64 ປີ ທີ່ມີບັນຫາສຸຂະພາບ ຊຳເຮື້ອດັ່ງເຊັ່ນ:
  - -ໂຣກຫົວໃຈ
  - -ໂຣກປອດ
  - -ໂຣກເລືອດຈາງຈາກເມັດເລືອດແດງຮູບກ່ຽວ
  - -ໂຣກເບົາຫວານ
  - -ໂຣກຕິດເຫຼົ້າ
  - -ໂຣກຕັບແຂງ
  - -ການຮົ່ວຂອງນ້ຳລ້ຽງສະໝອງ ຫຼື ປະສາດຫູທຽມ
- ໃຜກໍ່ຕາມທີ່ອາຍຸລະຫວ່າງ 2 ຫາ 64 ປີ ທີ່ເປັນໂຣກ ຫຼື ມີອາການທີ່ເຮັດໃຫ້ ພູມຕ້ານທານຕໍ່ການຕິດເຊື້ອຕ່ຳລົງ, ດັ່ງເຊັ່ນ:
  - - ມະເຮັງຕ່ອມນ້ຳເຫຼືອງແບບຮອດກິ້ນ (Hodgkin's disease)
  - - ມະເຮັງຕ່ອມນ້ຳເຫຼືອງ ຫຼື ໂຣກມະເຮັງເມັດເລືອດຂາວ
  - - ໝາກໄຂຫຼັງຫຼົ້ມເຫຼວ
  - - ເນື້ອງອກໃນໄຂກະດູກ
  - - ໂຣກໄຂ່ຫຼັງຊຶມນ້ຳມັນ (nephrotic syndrome)
  - - ຕິດເຊື້ອເອຈໄອວີ (HIV) ຫຼື ເອດສ໌ (AIDS)
  - - ມ້າມໄດ້ຮັບຄວາມເສຍຫາຍ ຫຼື ບໍ່ມີມ້າມ
  - - ໄດ້ມີປ່ຽນຖ່າຍອະໄວຍະວະ
- ໃຜກໍ່ຕາມທີ່ອາຍຸລະຫວ່າງ 2 ຫາ 64 ປີ, ທີ່ກຳລັງກິນຢາ ຫຼື ປິ່ນປົວ ທີ່ເຮັດ ໃຫ້ພູມຕ້ານທານຕໍ່ການຕິດເຊື້ອຕ່ຳລົງ, ເຊັ່ນ:
  - - ກິນຢາສະເຕີຣອຍ ໄລຍະຍາວນານ
  - - ກິນຢາປິ່ນປົວມະເຮັງບາງຢ່າງ
  - - ມີການປິ່ນປົວໂດຍໃຊ້ລັງສີ
- ຜູ້ໃຫຍ່ທຸກຄົນທີ່ ອາຍຸລະຫວ່າງ 19 ຫາ 64 ປີ ທີ່ເປັນ:
  - - ຄົນສູບຢາປະຈຳ
  - - ໂຣກຫືດ

ຢາວັກຊີນ PPSV ອາດຈະມີປະສິດທິຜົນໜ້ອຍກວ່າສຳລັບບາງຄົນ, ໂດຍສະເພາະແລ້ວ ຜູ້ທີ່ມີພູມຕ້ານທານຕໍ່ການຕິດເຊື້ອຕ່ຳ.



Over . . .

ແຕ່ວ່າຄົນຈຳພວກນີ້ກໍ່ຈຳເປັນທີ່ຈະຕ້ອງໄດ້ມີການສັກຢາວັກຊີນ, ເພາະວ່າພວກເຂົາ ອາດຈະມີບັນຫາທີ່ຮຸນແຮງ ຖ້າຫາກພວກເຂົາຫາກເກີດຕິດເຊື້ອໂຣກ ນິວໂມຄອກຄັສ.

ເດັກນ້ອຍທີ່ຕິດເຊື້ອທາງຫູ, ຊ່ອງຮູດັງ ຫຼື ໂຣກທາງເດີນການຫາຍໃຈຢູ່ເລື້ອຍໆ, ແຕ່ຍົກເວັ້ນແຕ່ຄົນທີ່ແຂງແຮງ, ບໍ່ຈຳເປັນຕ້ອງສັກຢາວັກຊີນ PPSV ເພາະວ່າມັນບໍ່ມີປະສິດທິຜົນຕໍ່ກັບໂຣກເຫຼົ່ານັ້ນ.

## 4 ຈຳເປັນຕ້ອງສັກຢານີ້ຈຳນວນຈັກຊຸດ, ແລະ ເມື່ອໃດ?

ປົກກະຕິແລ້ວຕ້ອງສັກຢາ PPSV ພຽງແຕ່ຊຸດດຽວເທົ່ານັ້ນ, ແຕ່ໃນບາງກໍລະນີອາດຈຳເປັນຕ້ອງໄດ້ສັກຢານີ້ສອງຊຸດ.

- ແນະນຳໃຫ້ສັກຢານີ້ຊຸດທີສອງ ສຳລັບຜູ້ມີອາຍຸ 65 ປີ ຫຼື ແກ່ກວ່າ ທີ່ໄດ້ສັກຢານີ້ຄັ້ງທຳອິດເມື່ອຕອນທີ່ອາຍຸຕ່ຳກວ່າ 65 ປີ ແລະ ກໍ່ຜ່ານໄປແລ້ວໄດ້ 5 ປີ ຫຼືດົນກວ່ານັ້ນ ນັບຈາກການສັກຢາຄັ້ງທຳອິດ.
- ແນະນຳໃຫ້ສັກຢານີ້ຊຸດທີສອງສຳລັບຜູ້ທີ່ມີອາຍຸລະຫວ່າງ 2 ຫາ 64 ປີ ຊຶ່ງເປັນຜູ້ທີ່:
  - ມ້າມໄດ້ຮັບຄວາມເສຍຫາຍ ຫຼື ບໍ່ມີມ້າມ
  - ມີໂຣກເລືອດຈາກຈາກເມັດເລືອດແດງຮູບກ່ຽວ
  - ຕິດເຊື້ອ ເອຈໄອວີ (HIV) ຫຼື ເອດສ໌ (AIDS)
  - ເປັນມະເຮັງ, ໂຣກມະເຮັງເມັດເລືອດຂາວ, ໂຣກຕ່ອມນ້ຳເຫລືອງ, ເນື້ອງອກໃນໄຂກະດູກ
  - ໂຣກໄຂ່ຫຼັງຊຶມນ້ຳມັນ (nephrotic syndrome)
  - ໄດ້ຮັບການປ່ຽນຖ່າຍອະໄວຍະວະ ຫຼື ໄຂກະດູກ
  - ກຳລັງກິນຢາທີ່ເຮັດໃຫ້ພູມຕ້ານທານຕ່ຳລົງ (ດັ່ງເຊັ່ນ ຢາປິ່ນປົວມະເຮັງ ຫຼື ກິນຢາສະເຕຍຣອຍເປັນເວລາຍາວນານ )

ເມື່ອຈະມີການສັກຢານີ້ ຊຸດທີສອງ, ຄວນຈະເວັ້ນໄລຍະຫ່າງຈາກຊຸດທີໜຶ່ງເປັນເວລາ 5 ປີ.

## 5 ຄົນຈຳນວນໜຶ່ງບໍ່ສົມຄວນສັກຢາ PPSV ຫຼື ຄວນຈະລໍຖ້າ

- ໃຜກໍ່ຕາມທີ່ເຄີຍອາການແພ້ທີ່ຮຸນແຮງຕໍ່ຊີວິດຕໍ່ວັກຊີນ PPSVບໍ່ຄວນທີ່ຈະສັກຢາຊຸດທີສອງ.
- ໃຜກໍ່ຕາມທີ່ ມີອາການແພ້ຢ່າງຮຸນແຮງຕໍ່ສ່ວນປະກອບໃດໜຶ່ງຂອງຢາວັກຊີນ ບໍ່ຄວນທີ່ຈະສັກຢານີ້. ຈົ່ງບອກກັບຜູ້ໃຫ້ບໍລິການຂອງທ່ານຖ້າຫາກທ່ານມີອາການແພ້ ຢ່າງຮຸນແຮງ.
- ໃຜກໍ່ຕາມທີ່ມີອາການປ່ວຍໜັກ ໃນເວລາທີ່ຈະມີການສັກຢາວັກຊີນ, ອາດຈະຖືກຮຽກຮ້ອງໃຫ້ລໍຖ້າຈົນຈະຫາຍດີ ກ່ອນທີ່ຈະສັກຢາ.

  ຄົນທີ່ມີອາການປ່ວຍພຽງເລັກໜ້ອຍ ອາດສາມາດສັກຢາວັກຊີນໄດ້ເລີຍ.
- ເຖິງວ່າຈະບໍ່ມີຫຼັກຖານຢືນຢັນໄດ້ວ່າ ຢາວັກຊີນ PPSV ເປັນອັນຕະລາຍຕໍ່ຜູ້ຍິງຖືພາ ຫຼື ເດັກໃນທ້ອງ, ກໍ່ບໍ່ແນະນຳໃຫ້ສັກຢາ ວັກຊີນນີ້. ຜູ້ຍິງຖືພາທີ່ມີອາການປ່ວຍຊຳເຮື້ອຄວນຈະປຶກສາກັບຜູ້ໃຫ້ບໍລິການກ່ອນທີ່ຈະສັກຢາວັກຊີນ. ຜູ້ຍິງທີ່ເປັນໂຣກທີ່ຮູ້ຕົນເອງວ່າອາດຈະມີຄວາມສ່ຽງທີ່ຈະເປັນໂຣກ ນິວໂມຄອກຄັສ ຄວນຈະຮັບການສັກຢາວັກຊີນກ່ອນທີ່ເຂົາເຈົ້າຈະຖືພາ, ຖ້າຫາກເປັນໄປໄດ້.

## 6 ຄວາມສ່ຽງທີ່ເກີດຈາກຢາວັກຊີນ PPSV ມີຫຍັງແດ່?

ປະມານເຄິ່ງໜຶ່ງຂອງຄົນທີ່ໄດ້ສັກຢາ PPSV ມີອາການຂ້າງຄຽງ ເລັກໜ້ອຍ, ດັ່ງເຊັ່ນ ຜິວແດງ ຫຼື ເຈັບບໍລິເວນທີ່ມີການສັກຢາວັກ.

ຈຳນວນໜ້ອຍກວ່າ 1% ເປັນໄຂ້, ເຈັບກ້າມເນື້ອ ຫຼື ມີອາການປ່ຽນແປງທາງເຄມີພາຍໃນຢ່າງຮຸນແຮງ.

ຢາວັກຊີນ, ກໍ່ຄືກັນກັບຢາທົ່ວໄປອື່ນໆ, ມັນອາດຈະເປັນສາຍເຫດຂອງການປ່ຽນແປງທາງເຄມີທີ່ຮຸນແຮງ. ແຕ່ວ່າຄວາມສ່ຽງຂອງການສັກຢາວັກຊີນທີ່ເປັນໄພອັນຕະລາຍທີ່ຮຸນແຮງ ຫຼື ເສຍຊີວິດນັ້ນ ແມ່ນຖືວ່າມີໂອກາດເກີດຂື້ນໄດ້ໜ້ອຍທີ່ສຸດ.

## 7 ຈະເຮັດຈັ່ງໃດ ຖ້າຫາກມີການປ່ຽນແປງທາງເຄມີທີ່ຮຸນແຮງ?

**ຂ້ອຍຄວນຈະກວດກາເບິ່ງຫຍັງ?**

ຖ້າມີອາການທີ່ບໍ່ປົກກະຕິ, ເຊັ່ນວ່າ ເປັນໄຂ້ສູງ ຫຼື ມີການປ່ຽນແປງທາງພຶດຕິກຳ. ສັນຍານຂອງການປ່ຽນແປງທາງເຄມີຂອງອາການແພ້ຢ່າງຮຸນແຮງອາດ ລວມມີ ຫັນໃຈຍາກ, ສຽງແຫບ ຫຼື ຫາຍໃຈເປັນສຽງຫວີດ, ເປັນຕຸ່ມແດງຕາມຜິວໜັງ, ຜິວຊີດເຫຼືອງ, ອ່ອນເພຍ, ຫົວໃຈເຕັ້ນໄວ ຫຼື ວິນຫົວ.

**ຂ້ອຍຄວນຈະເຮັດຫຍັງແດ່?**

- ໃຫ້ໂທຣຫາທ່ານໝໍ, ຫຼື ໃຫ້ຄົນໄປຫາທ່ານໝໍໃນທັນໃດ.
- ບອກກັບທ່ານໝໍວ່າເກີດຫຍັງຂື້ນ, ວັນທີ ແລະ ເວລາທີ່ມັນເກີດຂື້ນ, ແລະ ເມື່ອໃດທີ່ທ່ານໄດ້ມີການສັກຢາວັກຊີນ.
- ຮ້ອງຂໍໃຫ້ຜູ້ໃຫ້ບໍລິການລາຍງານ ເຫດການທີ່ເກີດຂື້ນໂດຍການຍື່ນແບບຟອມ ລະບົບລາຍງານເຫດການກະທົບຂອງຢາວັກຊີນ (VAERS). ຫຼື ທ່ານສາມາດຍື່ນຄຳຮ້ອງນີ້ໂດຍຜ່ານເວບໄຊ໌ຂອງ VAERS ທີ່ www.vaers.hhs.gov, ຫຼື ໂທຣຫາໝາຍເລກ 1-800-822-7967.

*VAERS ບໍ່ໄດ້ໃຫ້ຄຳແນະນຳດ້ານການແພດ.*

## 8 ຂ້ອຍຈະຮຽນຮູ້ເພີ່ມເຕີມໄດ້ແນວໃດ?

- ໃຫ້ທ່ານຖາມຜູ້ໃຫ້ບໍລິການຂອງທ່ານ. ເຂົາເຈົ້າອາດຈະເພີ່ມຕື່ມຊຸດຂໍ້ມູນຂອງຢາວັກຊີນໃຫ້ທ່ານ ຫຼື ແນະນຳແຫຼ່ງຂໍ້ມູນຂ່າວສານອື່ນໃຫ້ທ່ານ.
- ໂທຣະສັບຫາກົມສາທາລະນະສຸກ ປະຈຳຣັຖ ຫຼື ທ້ອງຖິ່ນ.
- ຕິດຕໍ່ ສູນຄວບຄຸມ ແລະປ້ອງກັນໂຣກ (CDC):
  - ໂທຣະສັບ 1-800-232-4636 (1-800-CDC-INFO) ຫຼື
  - ຢ້ຽມຢາມເວບໄຊ໌ຂອງ CDC ທີ່ www.cdc.gov/vaccines.

DEPARTMENT OF HEALTH AND HUMAN SERVICES
CENTERS FOR DISEASE CONTROL AND PREVENTION

Vaccine Information Statement
PPSV (4/16/09) - Laotian 42 U.S.C. § 300aa-26
Translation provided by the Minnesota Department of Health